


# ພາບລວມກ່ຽວກັບບົດບາດຍິງ-ຊາຍ ແລະ ທີ່ດິນ ໃນພາກພື້ນແມ່ນ້ຳຂອງ

## ບົດສະຫຼຸບສັງລວມ

## ຄວາມເປັນມາ

ຄວາມສະເໝີພາບລະຫວ່າງ ຍິງ-ຊາຍແມ່ນສ່ວນໜຶ່ງຂອງການຄຸ້ມຄອງທີ່ດິນທີ່ດີ. ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ເນັ້ນໜັກເຖິງຄວາມຍຸດຕິທຳ. ການຄຸ້ມຄອງທີ່ດິນທີ່ມີຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ຮັບປະກັນວ່າຜູ້ຊາຍ ແລະ ແມ່ຍິງສາມາດມີສ່ວນຮ່ວມຢ່າງເທົ່າທຽມໃນສຳພັນຂອງພວກເຂົາຕໍ່ກັບທີ່ດິນ, ໂດຍຜ່ານທັງສະຖາບັນທາງການ ແລະ ການບໍລິຫານການຄຸ້ມຄອງ ທີ່ດິນແບບບໍ່ເປັນທາງການ. ມັນໝາຍຄວາມວ່າ ຂະບວນການ ແລະ ສະຖາບັນຄຸ້ມຄອງການຄອບຄອງທີ່ດິນແມ່ນມີຄວາມໂປ່ງໃສ, ມີການປຶກສາຫາລື ແລະ ມີສ່ວນຮ່ວມ, ແລະ ຜົນປະໂຫຍດ, ຄວາມຕ້ອງການ ແລະ ບຸລິມະສິດທີ່ແຕກຕ່າງກັນຂອງປະຊາຊົນທັງໝົດກ່ຽວກັບທີ່ດິນ, ບໍ່ວ່າຈະເປັນເພດໃດກໍຕາມ, ແມ່ນໄດ້ຮັບການແກ້ໄຂ. ມັນຍັງມີຄວາມຈຳເປັນສຳລັບການພັດທະນາເສດຖະກິດແບບຍືນຍົງ.

*ພາບລວມກ່ຽວກັບບົດບາດຍິງ-ຊາຍ ແລະ ທີ່ດິນໃນພາກພື້ນແມ່ນ້ຳຂອງ* ກຳນົດບູລິມະສິດຍຸດທະສາດຕ່າງໆເພື່ອເສີມສ້າງການຄຸ້ມຄອງທີ່ດິນທີ່ມີຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ໃນພາກພື້ນ. ພາບລວມດັ່ງກ່າວສະໜອງຂໍ້ມູນພື້ນຖານເພື່ອແນະນຳນະໂຍບາຍ ແລະ ການຈັດຕັ້ງປະຕິບັດທີ່ມີທ່າແຮງ. ພາບລວມດັ່ງກ່າວເລີ່ມຕົ້ນໂດຍການກຳນົດບົດບາດຍິງ-ຊາຍ ແລະ ທີ່ດິນໃນພາກພື້ນແມ່ນ້ຳຂອງ (ປະເທດກຳປູເຈຍ, ສປປ ລາວ, ມຽນມາ ແລະ ຫວຽດນາມ) ໃນເງື່ອນໄຂ ແນວຮູບແບບຄວາມຄິດໃນ ສະພາບການສາກົນ, ແລະ ພາກພື້ນ, ຈາກນັ້ນ ທົບທວນຄືນນະໂຍບາຍ ແລະ ກອບກົດໝາຍທີ່ກ່ຽວຂ້ອງກັບທີ່ດິນ ແລະ ເງື່ອນໄຂສະເພາະດ້ານບົດບາດຍິງ-ຊາຍ. ສິ່ງນີ້ລວມເອົາກົດໝາຍວ່າດ້ວຍຄອບຄົວ, ກົດໝາຍວ່າດ້ວຍການສືບທອດມໍລະດົກ ແລະ ການລິເລີ່ມການຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ, ລວມທັງບັນຫາການຈັດຕັ້ງປະຕິບັດຕ່າງໆ. ບັນຫາເສດຖະກິດທີ່ກ່ຽວຂ້ອງກັບທີ່ດິນທີ່ເພີ່ມຢ່າງກວ້າງຂວາງຍັງໄດ້ຮັບການແກ້ໄຂ, ລວມທັງການຊື້ທີ່ດິນຂະໜາດໃຫຍ່ ແລະ ການລວມເອົາການຜະລິດກະສິກຳໄປສູ່ຕະຫຼາດພາກພື້ນ ແລະ ທົ່ວໂລກ, ແລະ ບັນຫາສະຖາບັນຕ່າງໆທີ່ສຳຄັນທີ່ກ່ຽວຂ້ອງກັບການມີສ່ວນຮ່ວມໃນການຄຸ້ມຄອງທີ່ດິນ, ການເຂົ້າເຖິງຄວາມຍຸດຕິທຳທາງດ້ານທີ່ດິນ ແລະ ສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີ. ຫົວຂໍ້ທີ່ພົ້ນເດັ່ນແມ່ນໄດ້ຖືກຍົກຂຶ້ນພ້ອມທັງຄຳແນະນຳຕ່າງໆ.

## ສະພາບການດ້ານນະໂຍບາຍພາກພື້ນ ແລະ ສາກົນ

ໃນຊຸມປີທີ່ຜ່ານມາ, ບັນຫາບົດບາດຍິງ-ຊາຍ ແລະ ທີ່ດິນໄດ້ກາຍເປັນຫົວຂໍ້ທີ່ຮ້ອນແຮງໃນວາລະນະໂຍບາຍທົ່ວໂລກ. ປະເທດກຳປູເຈຍ, ສປປ ລາວ, ມຽນມາ ແລະ ຫວຽດນາມ ມີທິດທາງການພັດທະນາທີ່ຄ້າຍຄືກັນຢ່າງກວ້າງຂວາງ ແລະ ມີພູມມີທັດທີ່ຫຼາກຫຼາຍ ໂດຍກວມເອົາທຸກສິ່ງ ນັບແຕ່ປ່າພູດອຍໄປຫາທົ່ງນາເຂດຮາບພຽງ. ໃນຂະນະທີ່ລະບົບການເມືອງ ແລະ ເສດຖະກິດມີຄວາມແຕກຕ່າງກັນໃນພາກພື້ນ, ຫຼາຍບັນຫາບົດບາດຍິງ-ຊາຍແມ່ນມີຄວາມຄ້າຍຄືກັນກວມຫຼາຍດ້ານ ແລະ ແມ່ຍິງຊົນເຜົ່າສ່ວນໜ້ອຍມັກຈະເປັນກຸ່ມທີ່ຖືກຈຳແນກຫຼາຍທີ່ສຸດ.

ບົດບາດຍິງ-ຊາຍ ແລະ ການຄຸ້ມຄອງທີ່ດິນແມ່ນໄດ້ຖືກກຳນົດຂຶ້ນຮູບແບບກອບສາກົນພາຍໃຕ້ຄຳແນະນຳແບບສະໝັກໃຈກ່ຽວກັບການຄຸ້ມຄອງການຄອບຄອງທີ່ດິນ, ການປະມົງ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບ ໃນຂອບເຂດຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ (VGGTs), ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ແລະ ສົນທິສັນຍາກ່ຽວກັບການລົບລ້າງທຸກຮູບແບບຂອງການຈຳແນກຕໍ່ແມ່ຍິງ (CE_DAW). ທຸກພາກສ່ວນໃນ CEDAW – ເຊິ່ງລວມເຖິງພາກພື້ນແມ່ນ້ຳຂອງ – ເຫັນດີທີ່ຈະປະນາມການຈຳແນກຕໍ່ແມ່ຍິງໃນທຸກຮູບແບບ ແລະ ດຳເນີນນະໂຍບາຍການລົບລ້າງດ້ວຍທຸກວິທີການທີ່ເໝາະສົມ ໂດຍບໍ່ມີການຊັກຊ້າ. ພາຍໃນສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ), ນະໂຍບາຍທີ່ສຳຄັນແມ່ນຖະແຫຼງການປີ 2017 ກ່ຽວກັບການຈັດຕັ້ງປະຕິບັດວຽກງານບົດບາດຍິງ-ຊາຍ ພາຍໃຕ້ວິໄສທັດປະຊາຄົມອາຊຽນ 2025 ແລະ SDGs, ເຊິ່ງນຳໄປສູ່ຂອບຍຸດທະສາດເຊື່ອມໂຍງບົດບາດຍິງ-ຊາຍຂອງອາຊຽນ 2021 – 2025. ການສົ່ງເສີມການມີສ່ວນຮ່ວມທີ່ມີຄວາມໝາຍສຳຄັນຂອງແມ່ຍິງໃນການຕັດສິນໃຈແມ່ນຄຳໝັ້ນສັນຍາທີ່ສຳຄັນຂອງຖະແຫຼງການນີ້.

## ຫົວຂໍ້ທີ່ພົ້ນເດັ່ນ ແລະ ຄຳແນະນຳ

**ການສົ່ງເສີມຄວາມເຂັ້ມແຂງດ້ານນະໂຍບາຍ:** ໂດຍທົ່ວໄປແລ້ວ, ກອບນະໂຍບາຍໃນພາກພື້ນແມ່ນ້ຳຂອງໂດຍທົ່ວໄປໄດ້ສ້າງພື້ນຖານທີ່ພຽງພໍສຳລັບຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ກ່ຽວກັບທີ່ດິນ, ໂດຍສະເພາະແມ່ນຢູ່ປະເທດຫວຽດນາມ. ສິ່ງທີ່ໜ້າເປັນຫ່ວງແມ່ນ "ຄວາມມືດບອດລະຫວ່າງທາງເພດ (ຍິງ-ຊາຍ)" ຂອງຫຼາຍຂໍ້ກົດໝາຍໃນ 4 ປະເທດ, ລວມທັງບາງມາດຕາຂອງລັດຖະທຳມະນູນ.

- ***ຄຳແນະນຳ:*** ເສີມສ້າງກອບນະໂຍບາຍຜ່ານບົດບັນຍັດທີ່ຈະແຈ້ງກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ປັບປຸງລັດຖະທຳມະນູນເພື່ອຫ້າມບັນດາມາດຖານທາງສັງຄົມທີ່ຈຳແນກບົດບາດຍິງ-ຊາຍ ຢ່າງຈະແຈ້ງ.





© Steve Allen







**ສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີ:** ລະບົບສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີ ແລະ ການປະຕິບັດມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍໃນພາກພື້ນ. ຂະບວນການປະຕິບັດໃນການກຳນົດ ແລະ ການສ້າງແຜນການປະຕິບັດສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີ, ເຂດແດນ ແລະ ກົນໄກການຄຸ້ມຄອງແມ່ນອາດຈະມີຄວາມຫຍຸ້ງຍາກ. ຄວາມຊັກຊ້າໃນການລວມເອົາຄວາມກັງວົນກ່ຽວກັບບົດບາດ ຍິງ-ຊາຍ ເຂົ້າໃນແຜນການປະຕິບັດອາດຈະກາຍເປັນ 'ສ່ວນເສີມເພີ່ມຕື່ມ' ທີ່ບໍ່ເປັນທີ່ຍອມຮັບໃນວິທີການທີ່ສັບສົນທີ່ມີຢູ່ແລ້ວ.

- ***ຄຳແນະນຳ:*** ເພື່ອເພີ່ມປະສິດຕິພາບ ແລະ ຮັບປະກັນຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບການຈັດການສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີ, ວິທີການທີ່ລວມເອົາບົດບາດຍິງ-ຊາຍຢ່າງເຕັມສ່ວນຕ້ອງຖືກນຳໃຊ້ຕັ້ງແຕ່ເລີ່ມຕົ້ນ, ໂດຍມີຂໍ້ກຳນົດທີ່ຈະແຈ້ງເພື່ອຈັດຕັ້ງປະຕິບັດ.

**ຊົນເຜົ່າສ່ວນໜ້ອຍ ແລະ ສິດທິຊົນເຜົ່າພື້ນເມືອງ:** ໃນພາກພື້ນ, ຄົນດ້ອຍໂອກາດຫຼາຍຄົນແມ່ນມາຈາກຊົນເຜົ່າພື້ນເມືອງ ຫຼື ຊົນເຜົ່າສ່ວນໜ້ອຍ; ໂດຍທົ່ວໄປແລ້ວ ກຸ່ມຄົນເຫຼົ່ານີ້ແມ່ນຜູ້ທີ່ມີຄວາມສ່ຽງຫຼາຍທີ່ສຸດ ແລະ ແມ່ຍິງມັກຈະເປັນຜູ້ດ້ອຍໂອກາດທີ່ສຸດໃນບັນດາກຸ່ມຄົນດັ່ງກ່າວ.

- ***ຄຳແນະນຳ:*** ວິທີການບໍລິຫານ ແລະ ລະບຽບການໃນການຄຸ້ມຄອງທີ່ດິນ ຈຳເປັນຕ້ອງໄດ້ແກ້ໄຂຈຸດອ່ອນຂອງຊົນເຜົ່າສ່ວນໜ້ອຍ, ໂດຍສະເພາະແມ່ຍິງຊົນເຜົ່າສ່ວນໜ້ອຍ, ຢ່າງເປັນລະບົບ.

**ຄວາມບໍ່ຈະແຈ້ງທາງດ້ານກົດໝາຍ:** ກອບກົດໝາຍໃນພາກພື້ນມີຄວາມບໍ່ຊັດເຈນກ່ຽວກັບສະຖານະທາງດ້ານປະເພນີ ທຽບກັບ ການຄອບຄອງທີ່ດິນຕາມກົດໝາຍ.

- ***ຄຳແນະນຳ:*** ຄວາມບໍ່ຈະແຈ້ງທາງດ້ານກົດໝາຍຄວນໄດ້ຮັບການແກ້ໄຂໂດຍຜ່ານການປະຕິຮູບນິຕິກຳຢ່າງຮອບດ້ານ, ລວມທັງລະດັບຂອງລະບຽບການ ແລະ ກົດໝາຍ.

**ການລົງທຶນທີ່ດິນ:** ຫຼັກຖານໄດ້ສະແດງໃຫ້ເຫັນວ່າແມ່ຍິງໄດ້ຮັບຜົນປະໂຫຍດໜ້ອຍກວ່າ ແລະ ຮັບຜິດຊອບຄ່າໃຊ້ຈ່າຍຫຼາຍກວ່າຈາກການລົງທຶນທີ່ດິນໂດຍການສຳປະທານໃນພາກພື້ນ, ເນື່ອງຈາກຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ໃນລະດັບຄົວເຮືອນ ແລະ ຊຸມຊົນ.

- ***ຄຳແນະນຳ:*** ຂໍ້ກຳນົດທາງດ້ານກົດໝາຍສຳລັບການຍິນຍອມແບບອິດສະຫຼະ, ການແຈ້ງລ່ວງໜ້າກ່ອນ ແລະ ທີ່ໄດ້ຮັບການຍິນຍອມ (FPIC) ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ESIA) ແມ່ນມີຄວາມຈຳເປັນ, ແຕ່ມາດຕະການຄວາມຮັບຜິດຊອບ ແລະ ການບັງຄັບໃຊ້ກົດໝາຍຕ້ອງມີຄວາມໜັກແໜ້ນ ແລະ ຄຳນຶງເຖິງການມີສ່ວນຮ່ວມ ແລະ ສິດທິຂອງແມ່ຍິງ. ແຜນງານເພື່ອເສີມສ້າງຄວາມສາມາດໃນການຄຸ້ມຄອງທ້ອງຖິ່ນຈະເປັນສິ່ງສຳຄັນ, ພ້ອມທັງຈະເປັນການຝັງມາດຕະການຕ່າງໆເພື່ອຮັບປະກັນການມີສ່ວນຮ່ວມຢ່າງສະເໝີພາບລະຫວ່າງຍິງ-ຊາຍພາຍໃນ FPIC.

**ການຄຸ້ມຄອງທີ່ດິນ:** ທຸກໆປະເທດໃນພາກພື້ນແມ່ນ້ຳຂອງໄດ້ຈັດຕັ້ງປະຕິບັດຂໍ້ລິເລີ່ມການຂຶ້ນທະບຽນ ແລະ ການອອກໃບຕາດິນໃນຫຼາຍທົດສະວັດທີ່ຜ່ານມາ. ຂໍ້ລິເລີ່ມບາງຢ່າງໄດ້ວາງອອກເພື່ອແກ້ໄຂຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ສິດທິຂອງແມ່ຍິງ, ແຕ່ຜົນໄດ້ຮັບແມ່ນມີຫຼາກຫຼາຍ.

- ***ຄຳແນະນຳ:*** ການຍອມຮັບຄວາມແຕກຕ່າງລະຫວ່າງແມ່ຍິງ (ແລະ ລະຫວ່າງຜູ້ຊາຍ) ແມ່ນມີຄວາມຈຳເປັນທີ່ຕ້ອງໄດ້ເອົາໃຈໃສ່ເພີ່ມຂຶ້ນ. ສິດທິຂອງປະຊາຊົນທີ່ຍັງບໍ່ໄດ້ແຕ່ງງານ, ຢ່າຮ້າງ, ແລະ ເປັນໝ້າຍ ຕ້ອງໄດ້ຮັບການປົກປ້ອງ, ໃນຂະນະທີ່ຕ້ອງມີລະດັບຂອງທາງເລືອກທີ່ຫຼາຍກວ່າເກົ່າຕ້ອງໄດ້ສະໜອງໃຫ້ແກ່ຄູ່ທີ່ແຕ່ງງານແລ້ວ, ນອກເໜືອຈາກການຊຸກຍູ້ການຂຶ້ນທະບຽນຮ່ວມພາຍໃຕ້ການແຕ່ງງານຕາມຄວາມເໝາະສົມ. ພ້ອມດຽວກັນນັ້ນ, ຕ້ອງໄດ້ທົບທວນ ແລະ ເຮັດໃຫ້ກົດໝາຍຄອບຄົວ ແລະ ທີ່ດິນ ມີຄວາມສອດຄ່ອງກັນ ກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນດ້ານສິດຕໍ່ຊັບສິນ.

**ຊ່ອງຫວ່າງຕ່າງໆໃນການຈັດຕັ້ງປະຕິບັດນະໂຍບາຍ:** ຫຼາຍນະໂຍ ບາຍໃນພາກພື້ນ ທີ່ໄດ້ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ຈະສະໜັບສະໜູນຄວາມສະເໝີພາບລະຫວ່າງຍິງ-ຊາຍໃນການຄຸ້ມຄອງທີ່ດິນ. ຢ່າງໃດກໍຕາມ, ມັນມີຊ່ອງຫວ່າງຂະໜາດໃຫຍ່ລະຫວ່າງນະໂຍບາຍເຫຼົ່ານີ້ ແລະ ການຈັດຕັ້ງປະຕິບັດໃນຕົວຈິງ. ທັງ 4 ປະເທດແມ່ນ້ຳຂອງທີ່ເປັນຈຸດສຸມຂອງພາບລວມດັ່ງກ່າວນີ້ ປະເຊີນກັບລະດັບຄວາມອາດສາມາດ (ທີ່ມີ/ບໍ່ມີ) ທາງດ້ານເຕັກນິກ ແລະ ຊັບພະຍາກອນເພື່ອຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ກົດໝາຍ.

- ***ຄຳແນະນຳ:*** ລາຍລະອຽດການດຳເນີນງານ ແລະ ຂັ້ນຕອນປະຈຳວັນຂອງວິທີການ ແລະ ຜູ້ທີ່ຈັດຕັ້ງປະຕິບັດ, ກົດໝາຍ ແລະ ນະໂຍບາຍຕ່າງໆ ທີ່ຖືກຈັດຕັ້ງປະຕິບັດ ເປັນສິ່ງທີ່ສຳຄັນ. ການປະສານງານລະຫວ່າງຄູ່ຮ່ວມພັດທະນາແມ່ນຈຳເປັນ ເພື່ອຫຼີກລ່ຽງການຊ້ຳຊ້ອນຂອງຄວາມພະຍາຍາມສະໜອງທຶນ ແລະ ສົ່ງເສີມການເຮັດວຽກຮ່ວມກັນ.

**ການຄຸ້ມຄອງທີ່ດິນແບບມີສ່ວນຮ່ວມ:** ການຄຸ້ມຄອງທີ່ດິນຂັ້ນທ້ອງຖິ່ນແມ່ນມີຄວາມສຳຄັນ, ລວມທັງຄວາມຈຳເປັນທີ່ມີ ການມີສ່ວນຮ່ວມຂອງຊຸມຊົນທີ່ມີຄວາມສະເໝີພາບລະຫວ່າງຍິງ-ຊາຍ ເຂົ້າໃນຂະບວນການ ແລະ ສະຖາບັນການຄຸ້ມຄອງທີ່ດິນໃນລະດັບທ້ອງຖິ່ນ.

- ***ຄຳແນະນຳ:*** ກົນໄກຄວາມຮັບຜິດຊອບແມ່ນມີຄວາມຈຳເປັນ ແລະ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດໃຊ້. ການຝຶກອົບຮົມ, ການສ້າງຄວາມອາດສາມາດ ແລະ ແນວຄວາມຄິດລິເລີ່ມກ່ຽວກັບການຄຳນຶງເຖິງບົດບາດຍິງ-ຊາຍແມ່ນຈຳເປັນເພື່ອເຮັດໃຫ້ການຄຸ້ມຄອງທີ່ດິນມີປະສິດທິຜົນ ແລະ ມີສ່ວນຮ່ວມທີ່ບໍ່ພຽງແຕ່ເປັນຕົວແທນຂອງຊົນຊັ້ນສູງທ້ອງຖິ່ນ.

**ມາດຖານທາງສັງຄົມກ່ຽວກັບບົດບາດຍິງ-ຊາຍ:** ຄຸນຄ່າທີ່ກ່ຽວຂ້ອງກັບບົດບາດຍິງ-ຊາຍ, ການປະຕິບັດ, ລະບົບຄວາມເຊື່ອ ແລະ ປະເພນີມັກຈະເປັນມາດຖານທີ່ຝັງເລິກເຊິ່ງພັດທະນາມາຢ່າງຊ້າໆຕາມການເວລາ. ສິ່ງເຫຼົ່ານີ້ອາດຈະຫຼຸດຄວາມພະຍາຍາມການຈັດຕັ້ງປະຕິບັດທາງດ້ານກົດໝາຍລົງເພື່ອຮັບປະກັນຄວາມສະເໝີພາບລະຫວ່າງຍິງ-ຊາຍກ່ຽວກັບທີ່ດິນ.


© VinhDao


© Jeff Cagle



© Zzvet



© VinhDao

ການປ່ຽນແປງບັນດາມາດຖານທາງສັງຄົມແມ່ນອາດຈະເປັນໄປໄດ້ ເຖິງແມ່ນວ່າຈະສະລັບສັບຊ້ອນຢ່າງຫຼີກລ່ຽງບໍ່ໄດ້ກໍຕາມ.

- ***ຄຳແນະນຳ:*** ອົງການຈັດຕັ້ງທາງສັງຄົມ ແລະ ລັດຖະບານສາມາດເຮັດວຽກຮ່ວມກັນກັບຕົວແບບຜູ້ນຳການປ່ຽນແປງຂັ້ນທ້ອງຖິ່ນ, ທັງຍິງ ແລະ ຊາຍ, ເພື່ອສົ່ງເສີມຄຸນຄ່າຄວາມສະເໝີພາບລະຫວ່າງຍິງ-ຊາຍ. ຄູ່ຮ່ວມພັດທະນາສາມາດຊ່ວຍໃຫ້ທຶນຮອນ ແລະ ການຊ່ວຍເຫຼືອດ້ານວິຊາການ.

**ການເສີມສ້າງຄວາມອາດສາມາດສຳລັບການຈັດຕັ້ງປະຕິບັດ:** ສິ່ງທີ່ສຳຄັນກ່ອນອື່ນໝົດແມ່ນຄວາມຕ້ອງການທີ່ຈະເສີມສ້າງຄວາມອາດສາມາດຂອງຜູ້ມີສ່ວນຮ່ວມທີ່ຫຼາກຫຼາຍ. ຄວາມພະຍາຍາມ ຫຼາຍຢ່າງໄດ້ເຮັດຂຶ້ນເພື່ອປັບປຸງຄວາມສະເໝີພາບລະຫວ່າງຍິງ-ຊາຍໃນການຄຸ້ມຄອງທີ່ດິນ, ການຂຶ້ນທະບຽນທີ່ດິນ, ການເຂົ້າເຖິງຄວາມຍຸດຕິທຳທາງດ້ານທີ່ດິນ ແລະ ການເຂົ້າຮ່ວມໃນການຕັດສິນໃຈກ່ຽວກັບທີ່ດິນ. ມາຮອດປະຈຸບັນ, ການຂາດຄວາມຕໍ່ເນື່ອງ, ການຈັດຕັ້ງປະຕິບັດຮ່ວມ ແລະ ການຕິດຕາມກວດກາໄດ້ສ້າງຜົນກະທົບຢ່າງໜັກໜ່ວງ.

- ***ຄຳແນະນຳ:*** ຕ້ອງມີການສົ່ງເສີມຊຸມຊົນໃນການຈັດຕັ້ງປະຕິບັດບົດບາດຍິງ-ຊາຍ ແລະ ທີ່ດິນ ທັງໃນລະດັບຊາດ ແລະ ພາກພື້ນໃນແມ່ນ້ຳຂອງ ເພື່ອຊຸກຍູ້ໃຫ້ມີການແລກປ່ຽນບົດຮຽນ ແລະ ປະສົບການ, ການຮ່ວມມືດ້ານການສົ່ງເສີມໃນບັນຫາສຳຄັນ ແລະ ການສ້າງການປ່ຽນແປງທີ່ສຳຄັນໃນລະດັບກວ້າງຂວາງ.

**ປ່າໄມ້ ແລະ ການປ່ຽນແປງດິນຟ້າອາກາດ:** ໃນຂະນະທີ່ພາກພື້ນແມ່ນ້ຳຂອງເປັນບ່ອນທີ່ມີເຂດປ່າໄມ້ຫຼາຍບ່ອນ, ການທຳລາຍປ່າ ແລະ ການລັກລອບຕັດໄມ້ທີ່ຜິດກົດໝາຍ ຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ. ນອກນີ້, ບາງເຂດຍັງມີຄວາມສ່ຽງຕໍ່ການເພີ່ມຂຶ້ນຂອງລະດັບນ້ຳທະເລ, ໄພແຫ້ງແລ້ງ, ແລະ ເຫດການໄພພິບັດທີ່ກ່ຽວຂ້ອງກັບສະພາບອາກາດ ແລະ ຄວາມກົດດັນອື່ນໆ. ແມ່ຍິງເປັນກຸ່ມທີ່ມີຄວາມສ່ຽງທີ່ສຸດໃນຊຸມຊົນທີ່ມີຄວາມສ່ຽງ.

- ***ຄຳແນະນຳ:*** ວິທີການພາກພື້ນທີ່ອີງໃສ່ກອບລະບຽບການອາຊຽນກ່ຽວກັບບົດບາດຍິງ-ຊາຍ ແລະ ການປ່ຽນແປງດິນຟ້າອາກາດແມ່ນມີຄວາມຈຳເປັນເພື່ອແກ້ໄຂຜົນກະທົບທາງລົບຂອງການຕັດໄມ້ທຳລາຍປ່າ ແລະ ການປ່ຽນແປງດິນຟ້າອາກາດທີ່ມີຕໍ່ຊົນເຜົ່າສ່ວນໜ້ອຍ ແລະ ຊຸມຊົນທີ່ມີຄວາມສ່ຽງອື່ນໆ ແລະ ແມ່ຍິງກໍແມ່ນກຸ່ມທີ່ດ້ອຍໂອກາດຫຼາຍກວ່າ.

**ຊ່ອງຫວ່າງຄວາມຮູ້ ແລະ ຂໍ້ມູນ:** ໃນຂະນະທີ່ພວກເຮົາມີຄວາມເຂົ້າໃຈດີຫຼາຍຂຶ້ນກ່ຽວກັບບົດບາດຍິງ-ຊາຍ ແລະ ທີ່ດິນ, ພວກເຮົາຍັງມີຫຼາຍສິ່ງທີ່ຕ້ອງໄດ້ຮຽນຮູ້. ການຂາດຂໍ້ມູນທີ່ດິນທີ່ສົມທຽບກັນໄດ້ໃນພາກພື້ນແມ່ນ້ຳຂອງ, ລວມທັງຂໍ້ມູນທີ່ສອດຄ່ອງກັນ ທີ່ແບ່ງແຍກຕາມເພດ ໃນລະດັບຊາດ ແລະ ທ້ອງຖິ່ນ, ເປັນສິ່ງທ້າທາຍອັນໃຫຍ່ຫຼວງໃນການກຳນົດບັນຫາ ແລະ ການຕິດຕາມຄວາມຄືບໜ້າເພື່ອແກ້ໄຂບັນຫາເຫຼົ່ານີ້.

- ***ຄຳແນະນຳ:*** ຂໍ້ມູນທີ່ກ່ຽວຂ້ອງ ທີ່ແບ່ງແຍກຕາມເພດຄວນໄດ້ຮັບການພັດທະນາຂຶ້ນໂດຍຜ່ານແຜນງານ ແລະ ການອອກແບບໂຄງການໃນລະດັບທ້ອງຖິ່ນຢ່າງລະມັດລະວັງ, ລວມທັງ ກົນໄກການລາຍງານລະດັບຊາດທີ່ກ່ຽວຂ້ອງ. ການຄົ້ນຄວ້າເພີ່ມເຕີມແມ່ນມີຄວາມຈຳເປັນກ່ຽວກັບຜົນກະທົບໃນໄລຍະຍາວຂອງນະໂຍບາຍ, ກົດໝາຍ, ແລະ ການປ່ຽນແປງເສດຖະກິດ-ສັງຄົມ.

## ຄຳແນະນຳທີ່ເປັນບູລິມະສິດລະດັບສູງ

ຄວາມສະເໝີພາບລະຫວ່າງຍິງ-ຊາຍແມ່ນມີຄວາມສຳຄັນຕໍ່ກັບການຄຸ້ມຄອງທີ່ດິນທີ່ດີ, ແລະ ບົດບາດຍິງ-ຊາຍແມ່ນມີຄວາມສຳຄັນຢູ່ສະເໝີ ທີ່ຈະຈັດຕັ້ງປະຕິບັດທີ່ເປັນບູລິມະສິດແມ່ນຈຳເປັນໃນຕໍ່ໜ້າເພື່ອ:

- ປັບປຸງການມີສ່ວນຮ່ວມຢ່າງມີຄວາມໝາຍຂອງແມ່ຍິງໃນການນຳພາຊຸມຊົນ ແລະ ການຕັດສິນໃຈທັງໃນລະດັບຄອບຄົວ ແລະ ຊຸມຊົນ;
- ຮັບຮູ້ ແລະ ຈັດຕັ້ງປະຕິບັດຢ່າງກ້ວາງຂວາງກ່ຽວກັບສິດຂອງແມ່ຍິງເພື່ອເປັນເຈົ້າຂອງ/ຮັບມໍລະດົກທີ່ດິນຕາມເງື່ອນໄຂທີ່ເທົ່າທຽມກັບຜູ້ຊາຍ, ແລະ ມີສິດອຳນາດດຽວກັນໃນການຕັດສິນໃຈນຳໃຊ້ທີ່ດິນ, ລວມທັງການເປັນຕົວແທນໃນສະຖາບັນຄຸ້ມຄອງທີ່ດິນແຫ່ງຊາດ, ແຂວງ ແລະ ທ້ອງຖິ່ນ ແລະ ອຳນາດການປົກຄອງ ແລະ ໃນການຕັດສິນໃຈກ່ຽວກັບການລົງທຶນທາງດ້ານກະສິກຳ;
- ປັບປຸງຄວາມອາດສາມາດ ແລະ ຄວາມເຂົ້າໃຈຂອງແມ່ຍິງກ່ຽວກັບບັນຫາການຄອບຄອງທີ່ດິນ ແລະ ກອບກົດໝາຍ ເພື່ອເຮັດໃຫ້ພວກເຂົາມີສ່ວນຮ່ວມໃນການຕັດສິນໃຈກ່ຽວກັບທີ່ດິນຢ່າງມີຄວາມໝາຍ;
- ຮັບປະກັນການເຂົ້າເຖິງຂອງແມ່ຍິງຕໍ່ກັບການບໍລິການຄຸ້ມຄອງທີ່ດິນ ແລະ ໃບຕາດິນໃນນາມຂອງຕົນເອງ (ບໍ່ພຽງແຕ່ຢູ່ໃນຊື່ຮ່ວມ) ເຖິງວ່າຈະມີອຸປະສັກດ້ານການບໍ່ຮູ້ໜັງສື ແລະ ດ້ານວັດທະນະທຳ-ສັງຄົມ;
- ສົ່ງເສີມເພີ່ມຕື່ມຕໍ່ກັບຈຸດສຸມກ່ຽວກັບບັນຫາການເຂົ້າເຖິງທີ່ດິນຂອງແມ່ຍິງ ແລະ ສິດສືບທອດໃນຊຸມຊົນຊົນເຜົ່າສ່ວນໜ້ອຍ, ໂດຍສະເພາະສິດພາຍໃຕ້ການຈັດສັນສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີ;
- ຊຸກຍູ້ເພີ່ມຕື່ມຕໍ່ກັບຄຳໝັ້ນສັນຍາໃນລະດັບພາກພື້ນ ເພື່ອເຫັນດີກ່ຽວກັບມາດຕະຖານ ແລະ ຕົວຊີ້ວັດໃນການຕິດຕາມຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການຄຸ້ມຄອງທີ່ດິນ ແລະ ສະໜັບສະໜູນການເກັບກຳຂໍ້ມູນແຫ່ງຊາດ ເພື່ອສ້າງຂໍ້ມູນສະຖິຕິປຽບທຽບ ທີ່ແບ່ງແຍກຕາມເພດໃນລະດັບທີ່ດີທີ່ສຸດ ເພື່ອໃຫ້ສາມາດຕິດຕາມຄວາມຄືບໜ້າໄດ້;
- ປູກຝັງຊຸມຊົນກ່ຽວກັບການຈັດຕັ້ງປະຕິບັດທີ່ມີຄວາມຫຼາກຫຼາຍກ່ຽວກັບບົດບາດຍິງ-ຊາຍ ແລະ ທີ່ດິນໃນພາກພື້ນ ເພື່ອສະໜັບສະໜູນການອອກແບບ ແລະ ການຈັດຕັ້ງປະຕິບັດມາດຕະການປັບປຸງຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການຄຸ້ມຄອງ ແລະ ການເຂົ້າເຖິງທີ່ດິນ.

ໃນລະດັບນະໂຍບາຍ ແລະ ກອບກົດໝາຍ, ທັງສີ່ປະເທດສາມາດປະຕິບັດຕາມຄຳແນະນຳກ່ຽວກັບບົດບາດຍິງ-ຊາຍ ແລະ ທີ່ດິນທີ່ສ້າງຂຶ້ນໂດຍຄະນະກຳມະທິການ CEDAW ໃນການກວດກາຢ່າງເປັນທາງການລ່າສຸດຂອງປະເທດກຳປູເຈຍ. ຄຳແນະນຳເຫຼົ່ານີ້ລວມມີ: ພວກເຂົາຄວນ: ດຳເນີນຂັ້ນຕອນຕ່າງໆເພື່ອຈັດສັນ ຫຼື ແຈກຢາຍທີ່ດິນຄືນໃຫ້ແມ່ຍິງ; ໃຫ້ຄວາມເອົາໃຈໃສ່ເປັນພິເສດຕໍ່ຄົນຊົນເຜົ່າພື້ນເມືອງ, ຊົນເຜົ່າສ່ວນໜ້ອຍ ແລະ ແມ່ຍິງຊົນນະບົດໃນການຕັ້ງຖິ່ນຖານທີ່ບໍ່ເປັນທາງການ; ແລະ ສ້າງການປະເມີນບົດບາດຍິງ-ຊາຍຢ່າງເປັນລະບົບໃນເວລາຮັບຮອງ ຫຼື ປັບປຸງກົດໝາຍ. ໃນລະດັບຂອງແຜນງານບໍລິຫານທີ່ດິນ ແລະ ການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການ, ທັງ 4 ປະເທດຍັງສາມາດໃຫ້ຄວາມສົນໃຈເພີ່ມຂຶ້ນຕໍ່ກັບນະວັດຕະກຳທີ່ສ້າງສັນ ແລະ ບັນທຶກການປະຕິບັດທີ່ດີຂອງໂລກບົນຫຼັກຖານໃຫ້ຫຼາຍຂຶ້ນ.

ພ້ອມນັ້ນ ຍັງມີບົດບາດຂອງຄູ່ຮ່ວມພັດທະນາໃນການຮ່ວມມືກັບລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມໃນການສ້າງຕົວຊີ້ວັດ ແລະ ກົນໄກຕິດຕາມກວດກາທີ່ຈະແຈ້ງ ແລະ ສະໜັບສະໜູນວິທີການຕ່າງໆຊໍ້າເລື້ອຍໆ. ສິ່ງນີ້ຈະລວມເຖິງການກຽມພ້ອມທີ່ຈະຊຸກຍູ້ການປັບຕົວຂອງການປະຕິບັດທີ່ດີຂອງໂລກ, ເພື່ອທີ່ວ່າການແກ້ໄຂແມ່ນສະເພາະກັບສະພາບການໃນລະດັບຊາດ ແລະ ທ້ອງຖິ່ນ ແລະ ໄດ້ຮັບການພັດທະນາຂຶ້ນຮ່ວມກັບຊຸມຊົນທ້ອງຖິ່ນ. ການຊອກຫາວ່າການປະຕິບັດໃດທີ່ດີທີ່ສຸດໃນສະພາບການທ້ອງຖິ່ນ ແລະ ລະດັບຊາດ ເພື່ອສະໜັບສະໜູນຄວາມສະເໝີພາບລະຫວ່າງຍິງ-ຊາຍໃນເລື່ອງທີ່ດິນ ຈະນຳໄປສູ່ຜົນໄດ້ຮັບທີ່ດີກວ່າສຳລັບປະຊາຊົນທຸກຄົນໃນພາກພື້ນແມ່ນ້ຳຂອງ- ໄວໜຸ່ມ, ຜູ້ສູງອາຍຸ, ແມ່ຍິງ ແລະ ຜູ້ຊາຍ, ຄົນທີ່ແຕ່ງງານແລ້ວ ແລະ ຄົນໂສດ, ຄົນຮັ່ງມີ ແລະ ຄົນທຸກຍາກ - ບໍ່ວ່າຈະສຳເລັດການສຶກສາລະດັບໃດ, ເປັນພິການ/ບໍ່ເປັນພິການ, ຊົນເຜົ່າ ຫຼື ເພດ.



© VinhDao


© Phuongphoto

ບົດຄວາມສະບັບຫຍໍ້ນີ້ແມ່ນບົດສະຫຼຸບຂອງເອກະສານສະບັບສົມບູນ: Daley, E., Campbell, N. Y., Lowry, J. (2023). *ພາບລວມກ່ຽວກັບບົດບາດຍິງ-ຊາຍ ແລະ ທີ່ດິນໃນພາກພື້ນແມ່ນ້ຳຂອງ.* ນະຄອນຫຼວງວຽງຈັນ: ໂຄງການຄຸ້ມຄອງທີ່ດິນ ພາກພື້ນແມ່ນ້ຳຂອງ.

ທ່ານສາມາດເບິ່ງເອກະສານອອນລາຍໄດ້ທີ່: https://www.mrlg.org/publications/outlook-on-gender-and-land-in-the-mekong-region/

**ຜູ້ຂຽນ:** Elizabeth Daley, Natalie Y. Campbell, and Jessica Lowry

**ບົດສັງລວມຫຍໍ້ນີ້ຂຽນໂດຍ:** Renee Chartres, Christophe Gironde, Alice Beban, Micah Ingalls, and Antoine Deligne.

**ຮ່າງ ແລະ ອອກແບບໂດຍ:** Watcharapol Isarangkul Na Ayuthaya

**ເອກະສານອ້າງອີງ:** Daley, E., Campbell, N. Y., Lowry, J. (2023). ພາບລວມກ່ຽວກັບບົດບາດຍິງ-ຊາຍ ແລະ ທີ່ດິນໃນພາກພື້ນແມ່ນ້ຳຂອງ. ນະຄອນຫຼວງວຽງຈັນ: ໂຄງການຄຸ້ມຄອງທີ່ດິນ ພາກພື້ນແມ່ນ້ຳຂອງ.

CC BY NC SA

ເອກະສານນີ້ໄດ້ຮັບການອະນຸຍາດພາຍໃຕ້ Creative Commons Attribution-NonCommercial-ShareAlike 4.0 International License (CC BY-NC-SA 4.0)

ໂຄງການຄຸ້ມຄອງບໍລິຫານລັດກ່ຽວກັບທີ່ດິນໃນພາກພື້ນແມ່ນ້ຳຂອງ (MRLG) ມີຈຸດປະສົງເພື່ອປັບປຸງຄວາມໝັ້ນຄົງໃນການຄອບຄອງນຳໃຊ້ທີ່ດິນຂອງຊາວກະສິກອນຂະໜາດນ້ອຍໃນພາກພື້ນແມ່ນ້ຳຂອງ ແລະ ໄດ້ດຳເນີນການຈັດຕັ້ງປະຕິບັດຢູ່ປະເທດ ກຳປູເຈຍ, ລາວ, ມຽນມາ ແລະ ຫວຽດນາມ ນັບແຕ່ເດືອນເມສາ 2014. MRLG ແມ່ນໂຄງການຂອງລັດຖະບານສະວິດເຊີແລນ, ໂດຍຜ່ານອົງການພັດທະນາ ແລະ ການຮ່ວມມືຂອງສະວິດ (SDC), ດ້ວຍການຮ່ວມທຶນຈາກລັດຖະບານເຢຍລະມັນ ແລະ ລັດຖະບານລັກຊຳເບີກ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ MRLG, ກາລຸນນາເຂົ້າເບິ່ງຂໍ້ມູນເພີ່ມຕື່ມໄດ້ທີ່ www.mrlg.org

**ຂໍ້ຈຳກັດຄວາມຮັບຜິດຊອບ**

ທັດສະນະ, ຄວາມຄິດເຫັນ ແລະ ການຕີຄວາມໝາຍທີ່ສະແດງອອກໃນສິ່ງພິມນີ້ແມ່ນການສະແດງອອກຂອງຜູ້ຂຽນ ແລະ ຜູ້ທີ່ປະກອບສ່ວນ. ເຊິ່ງຈະບໍ່ຄວນຖືກຕີຄວາມໝາຍວ່າເປັນຕົວແທນຂອງທັດສະນະ ຫຼື ຈຸດຢືນ ທີ່ເປັນທາງການ ຫຼື ບໍ່ເປັນທາງການຂອງ SDC, ປະເທດເຢຍລະມັນ ແລະ ລັກເຊມເບີກ.

**Produced by:**

MRLG
MEKONG REGION LAND GOVERNANCE

**Funded by:**

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

german cooperation
DEUTSCHE ZUSAMMENARBEIT

LUXEMBOURG AID & DEVELOPMENT

**Implemented by:**

Land Equity International

GRET

**Supported by:**

giz